


# ແມ່ຍິງຖືພາສາມາດ ໄດ້ຮັບການສັກວັກຊີນ Pfizer COVID-19

**ຢາວັກຊີນ Pfizer COVID-19 ໄດ້ຖືກແນະນຳໃຫ້ສັກໃຫ້ແມ່ຍິງຖືພາແລະສັກໄດ້ທຸກໆລະຍະຂອງການຖືພາ. ມີຄວາມສ່ຽງສູງວ່າແມ່ຍິງຖືພາແລະລູກໃນທ້ອງຈະເຈັບປ່ວຍຢ່າງຮ້າຍແຮງໄດ້ຈາກພະຍາດ COVID-19.**

ເພື່ອປົກປ້ອງຕົວທ່ານເອງແລະລູກໃນທ້ອງ, ທ່ານຕ້ອງໄດ້ຮັບການສັກຢາວັກຊີນ Pfizer ສອງໂດສ, ໂດຍໃຫ້ມີລະຍະຫ່າງກັນສາມອາທິດ.

ແມ່ຍິງທີ່ລ້ຽງລູກດ້ວຍນົມແມ່ສາມາດໄດ້ຮັບການສັກຢາວັກຊີນ Pfizer ໄດ້ທຸກເວລາແລະສາມາດສືບຕໍ່ໃຫ້ລູກກິນນົມໄດ້ຫຼັງຈາກໄດ້ຮັບການສັກຢາວັກຊີນແລ້ວ.

ຖ້າທ່ານກຳລັງຖືພາ, ຈົ່ງເຮັດນັດພົບເພື່ອໄປລົມກັບທ່ານໝໍຂອງທ່ານກ່ຽວກັບການສັກຢາວັກຊີນ.

ສຳລັບຂໍ້ມູນເພີ່ມເຕີມ, ຈົ່ງເຂົ້າໄປທີ່ **health.gov.au/covid19-vaccines-languages**, ຫຼື **ໂທເລກ 1800 020 080**.

ສຳລັບບໍລິການນາຍພາສາ, ໃຫ້**ໂທເລກ 131450**.